ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງພຽງ
ຫ້ອງການ ອຸດສາຫະກຳ ແລະ ການຄ້າເມືອງ

ເລກທີ...60..../ຫອຄ.ມພ
ເມືອງພຽງ,ວັນທີ .19../.05./...2022

# ໜັງສືປະສານງານ

**ຮຽນ:** ທ່ານ ນາຍບ້ານ ທີ່ນອນຢູ່ໃນກຸ່ມບ້ານເປົ້າໝາຍ ສົ່ງເສີມ ກະສິກຳ ພາຍໃນເມືອງ ພຽງ.
**ເລື່ອງ:** ການສະໝັກຂໍທຶນສົມທົບສຳລັບພັດທະນາທຸລະກິດກະສິກຳຈາກໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ).

- **ອີງຕາມ** ຂໍ້ຕົກລົງຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າສະບັບເລກທີ 0926/ອຄ, ລົງວັນທີ 13 ກໍລະກົດ 2018 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຫ້ອງການ ອຸດສາຫະກຳ ແລະ ການຄ້າເມືອງ.
- **ອີງໃສ** ແຜນດຳເນີນງານໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) ວາງອອກສະບັບເລກທີ 19 ມັງກອນ 2022 ແຜນວຽກ ແລະ ງົບປະມານ ( AWPB )

ຫ້ອງການ ອຸດສາຫະກຳ ແລະ ການຄ້າເມືອງພຽງ ໃນນາມຄູ່ຮ່ວມການຈັດຕັ້ງປະຕິບັດໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) ໃນເມືອງພຽງມີຈຸດປະສົງ ແຈ້ງມາຍັງບັນດາ ຫົວໜ່ວຍທຸລະກິດ ກ່ຽວການສົ່ງເສີມການຜະລິດກະສິກຳ ແລະ ປ່າໄມ້ ເປັນສິນຄ້າ ຊາບວ່າ: ໂຄງການ ມີກອງທຶນສົມທົບສຳລັບພັດທະນາທຸລະກິດກະສິກຳແມ່ນເປັນໜຶ່ງໃນບັນດາກົນໄກການຈັດຕັ້ງປະຕິບັດໂຄງການທີ່ມີເປົ້າໝາຍເພື່ອເຮັດໃຫ້ຕ່ອງໂສ້ມູນຄ່າ ເພື່ອເຮັດໃຫ້ກຸ່ມຜູ້ດຳເນີນກິດຈະກຳທີ່ໂຄງການສະໜັບສະໜູນສາມາດເຂົ້າເຖິງຕະຫຼາດທີ່ດີກວ່າເກົ່າ ແລະ ປັບປຸງການເຂົ້າເຖິງການບໍລິການຂອງທຸລະກິດ, ໂດຍຜ່ານຫົວໜ່ວຍທຸລະກິດ ດັ່ງກ່າວ, ໂດຍໂຄງການຈະໃຫ້ການຊ່ວຍເຫຼືອດ້ານວິຊາການ ແລະ ການເງິນແກ່ຫົວໜ່ວຍທຸລະກິດກະສິກຳ ທີ່ມີຄວາມສົນໃຈ ແລະ ສະມັກເຂົ້າຮ່ວມຄັດເລືອກ ຂໍທຶນສະໜັບສະໜູນຂອງໂຄງການ.

ບັນດາຫົວໜ່ວຍທຸລະກິດທີ່ມີຄວາມສົນໃຈສະໝັກຂໍທຶນແມ່ນສາມາດພົວພັນ ແລະ ຂໍຂໍ້ມູນລາຍລະອຽດກ່ຽວກັບຂັ້ນຕອນ ແລະ ເງື່ອນໄຂການສະໝັກຂໍທຶນໄດ້ທີ່ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງພຽງ, ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງພຽງ (ຫ້ອງການປະສານງານໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ ).

❖ ສຳລັບຂັ້ນເມືອງແມ່ນປ່ອຍທຶນສົມທົບຫົວໜ່ວຍທຸລະກິດຂະໜາດຄົວເຮືອນ ແລະ ຂະໜາດນ້ອຍ.
ເງື່ອນໄຂຫົວໜ່ວຍທຸລະກິດກະສິກຳມີດັ່ງນີ້:

1. ມີຄວາມສົນໃຈຢາກເຮັດວຽກຮ່ວມກັບໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ).
2. ຫົວໜ່ວຍທຸລະກິດມີການຈັດທະບຽນທີ່ຖືກຕ້ອງຕາມກົດໝາຍ.
3. ຫົວໜ່ວຍທຸລະກິດທີ່ມີໃບແຈ້ງເສຍອາກອນ ແລະ ໃບຢັ້ງຢືນການເສຍອາກອນ.
4. ຫົວໜ່ວຍທຸລະກິດມີການດຳເນີນກິດຈະການຫຼາຍກວ່າ 3 ປີ.



สแกนด้วย CamScanner

5. ຫົວໜ່ວຍທຸລະກິດມີຄວາມສາມາດ, ປະສົບການໃນການສົ່ງເສີມທຸລະກິດກະສິກຳ ແລະ ການເຊື່ອມໂຍງກັບຊາວກະສິກອນສູ່ຕະຫຼາດ (ການເຊັນສັນຍາເກັບຊື້ການຜະລິດ).
6. ສຳລັບທຶນສົມທົບຂະໜາດນ້ອຍ ຖ້າຫົວໜ່ວຍຄົວເຮືອນໃດທີ່ມີຄວາມຕ້ອງການລິເລີ້ມທຸລະກິດໂດຍສະເພາະສະມາຊິກກຸ່ມຜະລິດແມ່ນສາມາດສະໝັກໄດ້ໂດຍເຂົ້າໄປປຶກສາຫາລືກັບທີມງານ ຫຼື ຫ້ອງການອຸດສາຫະກຳ-ການຄ້າເມືອງ.
7. ໄລຍະເວລາປະກາດ 15 ວັນ, ເລີ້ມແຕ່ວັນທີ 16 – 30 ພຶດສະພາ 2022.

ສະນັ້ນ, ທາງຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຈຶ່ງອອກແຈ້ງການສະບັບນີ້ເຖິງທ່ານທີ່ມີຄວາມສົນໃຈ.

**ຫົວໜ້າຫ້ອງການ**
**ອຸດສາຫະກຳ ແລະ ການຄ້າເມືອງ**

ຫ້ອງການ ອຸດສາຫະກຳ ແລະ ການຄ້າ ເມືອງພຽງ

ກອງໄຊ ໄຊຍະລາດ
Kongsay SAYALATH

**ຕິດຕໍ່ໄດ້ທີ່:**
- ປະສານງານໂຄງການຂັ້ນເມືອງ ໂທ: 020 5597 8677
- ຫ້ອງການອຸດສາຫະກຳ-ການຄ້າ ໂທ: 020 2375 2225

ສແກนด้วย CamScanner